ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ລໍ້ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟັກ (856-21) 213109, 213110

# ທະນາຄານແຫ່ງ ສປປ ລາວ ແລະ ອົງການການເງິນສາກົນ ປຶກສາຫາລືກ່ຽວກັບການພັດທະນາ ມາດຕະຖານໃນການຈັດໝວດໝູ່ກິດຈະກຳທຸລະກິດສີຂຽວ ສຳລັບ ສປປ ລາວ (Laos Green Finance Taxonomy)




ໃນຕອນບ່າຍຂອງວັນທີ 11 ມີນາ 2025, ທີ່ໂຮງແຮມຄລາວພລາຊາ, ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ອົງການການເງິນສາກົນ (IFC) ໄດ້ຮ່ວມກັນຈັດກອງປະຊຸມປຶກສາຫາລືຮ່ວມກັບບັນດາຂະແໜງການກ່ຽວຂ້ອງ ເພື່ອປຶກສາຫາລືກ່ຽວກັບຂະບວນການສ້າງມາດຕະຖານໃນການຈັດໝວດໝູ່ກິດຈະກຳທຸລະກິດສີຂຽວ ຂອງ ສປປ ລາວ ຫຼື Laos Green Finance Taxonomy ພາຍໃຕ້ໂຄງການພັດທະນາການເງິນສີຂຽວສຳລັບ ສປປ ລາວ ຮ່ວມກັບ ອົງການ IFC (ປີ 2023-2027), ໂດຍການເປັນປະທານຮ່ວມຂອງທ່ານ ແສງທະວົງ ຫຼວງລາດ, ຮອງຫົວໜ້າກົມຮ່ວມມືສາກົນ, ທຫລ ແລະ ທ່ານ ພົງສະຫວັນ ພົມກອງ, ຫົວໜ້າຫ້ອງການ ອົງການ IFC ປະຈຳ ສປປ ລາວ, ພ້ອມດ້ວຍການເຂົ້າຮ່ວມຂອງຕາງໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ຕາງໜ້າຈາກບັນດາກະຊວງ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ.

ຈຸດປະສົງຂອງການຈັດກອງປະຊຸມໃນຄັ້ງນີ້ ກໍເພື່ອເປັນການຈັດຕັ້ງປະຕິບັດຕາມແຜນງານຂອງໂຄງການພັດທະນາການເງິນສີຂຽວສໍາລັບ ສປປ ລາວ ຮ່ວມກັບ ອົງການ IFC ໃນການສ້າງຄວາມຮັບຮູ້, ເຂົ້າໃຈທີ່ເລິກເຊິ່ງ ແລະ ກ້າວໄປເຖິງການລະດົມຄໍາຄິດຄໍາເຫັນຈາກບັນດາກະຊວງ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ໂດຍແນໃສ່ທ່າອ່ຽງຂອງສາກົນ ແລະ ພາກພື້ນກ່ຽວກັບການເງິນຍືນຍົງ ຫຼື ການເງິນສີຂຽວ, ຄວາມສາມາດຂອງ ສປປ ລາວ ໃນການດຶງດູດແຫຼ່ງທຶນສີຂຽວ ຄວາມໝາຍຄວາມສໍາຄັນ ໃນການສ້າງມາດຕະຖານໃນການຈັດໝວດໝູ່ກິດຈະກໍາທຸລະກິດສີຂຽວ ສໍາລັບ ສປປ ລາວ ທີ່ສອດຄ່ອງກັບມາດຕະຖານຂອງ ASEAN ແລະ ສາກົນ ເພື່ອເປັນບ່ອນອີງໃຫ້ສະຖາບັນການເງິນສາມາດ ສະໜອງສິນເຊື່ອສີຂຽວ, ພ້ອມທັງເປັນແນວທາງໃຫ້ພາກເອກະຊົນສາມາດພັດທະນາໂຄງການລົງທຶນສີຂຽວ ເພື່ອລະດົມທຶນ ແລະ ເປັນບ່ອນອີງໃຫ້ພາກລັດທີ່ກ່ຽວຂ້ອງສາມາດກໍານົດນະໂຍບາຍ ເພື່ອຊຸກຍູ້ສົ່ງເສີມກິດຈະກໍາທຸລະກິດທີ່ເປັນມິດຕໍ່ສິ່ງແວດລ້ອມ, ເພື່ອປະກອບສ່ວນໃສ່ເປົ້າໝາຍຂອງ ສປປ ລາວ ໃນການຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ສັນຍາ ປາຣີ. ນອກຈາກນີ້, ກອງປະຊຸມ ຍັງໄດ້ແລກປ່ຽນກ່ຽວກັບ ນິຍາມ ແລະ ອົງປະກອບສໍາຄັນຂອງມາດຕະຖານໃນການຈັດໝວດໝູ່ກິດຈະກໍາທຸລະກິດສີຂຽວ ສໍາລັບ ສປປ ລາວ, ລວມທັງວິທີການ ຫຼື ມາດຕະຖານໃນການຄັດເລືອກຂະແໜງການບູລິມະສິດ ເພື່ອນໍາມາສ້າງມາດຕະຖານໃນການຈັດໝວດໝູ່ກິດຈະກໍາທຸລະກິດສີຂຽວຂອງ ສປປ ລາວ ໃນໄລຍະທໍາອິດ.





ກອງປະຊຸມດັ່ງກ່າວ ແມ່ນໄດ້ດໍາເນີນເປັນເວລາເຄິ່ງວັນ ດ້ວຍບັນຍາກາດອັນຟົດຟື້ນ, ຜູ້ເຂົ້າຮ່ວມມີຄວາມເອົາໃຈໃສ່ໃນການຮັບຟັງ, ສົນທະນາແລກປ່ຽນຄໍາເຫັນຢ່າງກົງໄປກົງມາ ແລະ ບັນລຸໝາກຜົນອັນຈົບງາມ ຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້ເປັນຢ່າງດີ.

ຂ່າວ-ພາບ: ກົມຮ່ວມມືສາກົນ

*ຢູ່ເມືອງລາວໃຊ້ເງິນກີບລາວ*